ກຳລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໓໑/ປພຖຊ/໐໗໑໔໐໙**

# ຖແລງການ

## ກ່ຽວກັບ ຜົນກອງປະຊຸມສະພາ ຄັ້ງທີ 7

ພວກເຮົາ ປະຊາຊົນພັກ ແລະກຳລັງທັບ ເສຣີປະຊາທິປະໄຕລາວ ໄດ້ຕິດຕາມ ກອງປະຊຸມ ສະພາ ຄັ້ງທີ 7, ທີ່ໄດ້ເລີ້ມມາ ແຕ່ວັນທີ 22 ມີຖຸນາ ເຖິງ 9 ກໍຣະກະດາ 2009 ນີ້, ຢ່າງໃກ້ຊິດ ທີ່ສຸດ! ແລະ ໄດ້ພົບເຫັນວ່າ ບໍ່ມີສິ່ງໃດໃໝ່ໆ...ທັງເນື້ອໃນກອງປະຊຸມ ແລະຮູບການຈັດຕັ້ງປະຕິບັດ. ພາຍຫລັງທີ່ທ່ານ ທອງສິງ ທັມະວົງສ໌ ປະທານສະພາ ໄດ້ກ່າວໄຂກອງປະຊຸມແລ້ວ, ທ່ານບົວສອນ ບຸບຜາວັນ ນາຍົກຣັຖມົນຕຣີ ກໍກ່າວຣາຍງານ ປະຕິບັດແຜນພັທນາ ເສຖກິດສັງຄົມ ແລະງົບປະມານ. ຈາກນັ້ນ, ກໍແມ່ນທ່ານ ສີລາວົງສ໌ ໂຄດພັຍທູນ ຣັຖມົນຕຣີ ວ່າການ ແຜນການ ແລະ ການລົງທຶນ ກ່າວຣາຍງານ. ຕໍ່ໄປ, ກໍຟັງຣາຍງານງົບປະມານປະຈຳປີ 2007-2008, 2009-2010 ແລະທ້າຍສຸດ, ກໍສືບຕໍ່ ຟັງຣາຍງານ ຂອງຄນະ ໄອຍະການສານປະຊາຊົນສູງສຸດ.

ກ່ຽວກັບບັນຍາກາດ ຂອງການປະກອບຄວາມຄິດຄວາມເຫັນນັ້ນ ກໍມີແຕ່ເລື້ອງເກົ່າໆ ຊ້ຳໆຊາກໆ, ເປັນເລື້ອງທີ່ພັກຣັດ ເຄີຍເວົ້າກັນມາ ຫລາຍຄັ້ງຫລາຍທີນແລ້ວ, ແຕ່ກໍແກ້ໄຂຫຍັງບໍ່ໄດ້ ເປັນຕົ້ນ: ບັນຫາການສໍ້ຣາດ-ບັງຫລວງ, ການຄ້າໄມ້ເຖື່ອນ, ການໃຫ້ຕ່າງຊາດສຳປະທານ ຂຸດຄົ້ນບໍ່ແຮ່ ໂລຫະ, ສຳປະທານທີ່ດິນປູກຝັງ, ສຳປະທານທີ່ດິນ ສ້າງເສຖກິດພິເສດ, ສ້າງກາສີໂນ ແລະ ສະຖານທີ່ບັນເທີງ ຕ່າງໆ...ຊຶ່ງລ້ວນແລ້ວ ແຕ່ນຳຄວາມເດືອດຮ້ອນ ອັນໃຫຍ່ຫລວງ ມາສູ່ຊາດ ແລະປະຊາຊົນ ຢ່າງບໍ່ມີ ວັນສິ້ນສຸດລົງໄດ້.

ພາຍຫລັງ ທີ່ຣັຖບານ ໄດ້ອະທິບາຍ ຈຸດດີຈຸດອ່ອນ ກ່ຽວກັບຄວາມຫລົ້ມເຫລວ ໃນການພັທນາ ເສຖກິດສັງຄົມແລ້ວ, ສຸດທ້າຍກໍສລຸບວ່າ ຈຸດດີທັງໝົດ ແມ່ນເປັນຍ້ອນ ພັກຣັດ ສລາດ ສ່ອງໃສ,

ມີການນຳພາຖືກຕ້ອງ. ສ່ວນຈຸດອ່ອນນັ້ນ, ແມ່ນມາຈາກ ພນັກງານຣັຖກອນ ບໍ່ເຂົ້າໃຈ ແນວທາງປະຕິບັດງານ ຂອງພັກຣັດ; ຂາດທຶນຮອນ, ຂາດອຸປກອນພາຫະນະຮັບໃຊ້ແລະຂາດບຸກຄລະກອນທີ່ມີຄຸນພາບ.

ການໂຍນຄວາມຜິດໃຫ້ພນັກງານ, ຣັຖກອນ ວ່າ ບໍ່ເຂົ້າໃຈແນວທາງປະຕິບັດງານ ຂອງພັກຣັດນັ້ນ ແມ່ນບໍ່ຖືກຕ້ອງ... ເພາະ ທັງໆທີ່ພວກເຂົາ ເຮັດວຽກ ບໍ່ໄດ້ຮັບເງິນເດືອນ ຫລື ສາມເດືອນ ຈຶ່ງເບີກໃຫ້ເທື່ອນຶ່ງ, ພວກເຂົາ ກໍຍັງສູ້ຊົນເຮັດ ເພື່ອປະເທດຊາດຂອງຕົນໄດ້. ຄວນຈະເວົ້າວ່າຈຸດອ່ອນນັ້ນ, ເປັນຍ້ອນຣະບອບການປົກຄອງ ແລະພັກຣັດ ກໍຂາດຄຸນທັມ; ໃຊ້ອຳນາດຜເດັດການສຸດຂີດ ມາໂດຍຕລອດ, ຈຶ່ງຈະຖືກຕ້ອງກວ່າ.

ໃນຄວາມເປັນຈິງແລ້ວ, ການທີ່ພັກຣັດ ບໍ່ສາມາດ ແກ້ໄຂຄວາມເດືອດຮ້ອນ ຂອງປະຊາຊົນແລະການສູນເສັຽຊັພຍາກອນທັມຊາດ ຢ່າງຫລວງຫລາຍນັ້ນ, ມັນບໍ່ແມ່ນເປັນເລື້ອງແປກປລາດແຕ່ຢ່າງໃດເລີຍ... ເພາະຣະບົບເສຖກິດການຄ້າເສຣີນັ້ນ **ມັນບໍ່ໄດ້ເກີດມາຈາກທ້ອງ ຂອງຣະບອບສັງຄົມນິຍົມຄອມມິວນິສ.-** ພັກຣັດ ມີຄວາມຊິນເຄີຍ ໃນແຜນພັທນາເສຖກິດລວມໝູ່ສັງຄົມນິຍົມ; ເມື່ອຫັນມາເປັນເຈົ້າການ...ຂຶ້ນແຜນພັທນາເສຖກິດ ການຄ້າ ຕລາດເສຣີແລ້ວ, ກໍບໍ່ສາມາດ ທີ່ຈະເຮັດໄດ້!

ຕົວຢ່າງ: ທ່ານ ບົວສອນ ບຸບຜາວັນ ບ້ອຍວ່າ ໄດ້ຂຶ້ນເປັນນາຍົກ, ກໍປະກາດແຜນ ປາບການສໍ້ຣາດ-ບັງຫລວງ, ມີຄຳສັ່ງສັບປ່ຽນພນັກງານເຂດງານຕ່າງໆ, ສັ່ງປິດໂຮງເລື່ອຍ, ໂຮງງານແປໄມ້ ເຖິງ 1,128 ແຫ່ງ ໂດຍອ້າງວ່າ "ບໍ່ໄດ້ມາຕຖານ". ສັ່ງຢຸດການໃຫ້ສຳປະທານທີ່ດິນປູກຕົ້ນໄມ້ອຸດສາຫະກຳ. ສິ່ງຕ່າງໆເຫລົ່ານີ້, ມາຮອດປະຈຸບັນ, ຍິ່ງເປັນຮ້າຍຂຶ້ນກວ່າເກົ່າ...ແກ້ໄຂຫຍັງ ກໍບໍ່ໄດ້, ເພາະ ບໍ່ແກ້ທີ່ຕົ້ນຕໍຂອງບັນຫາ.- ຕົ້ນຕໍຂອງບັນຫາ ທີ່ພັກຣັດຄວນແກ້...ກໍແມ່ນ ຣະບອບຜເດັດການ ພັກດຽວຄອງອຳນາດ ນັ້ນເອງ!.... ມີບັນຫາກັບຜູ້ໃດ...ກໍຕ້ອງອອກໄປແກ້ໄຂກັບຜູ້ນັ້ນ.

ເຖິງຄາວແລ້ວ ທີ່ພັກປະຊາຊົນປະຕິວັດລາວ ແລະຣັຖບານ ຕ້ອງອອກມາໂອ້ລົມກັບ ພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ໃນເມື່ອໂລກ ໄດ້ເປີດໂອກາດ ໃຫ້ລາວສອງຝ່າຍໄດ້ຫັນໜ້າ ເຂົ້າມາ ແກ້ໄຂບັນຫາຊາດຮ່ວມກັນ ຕາມແນວທາງສັນຕິວິທີ... ດ້ວຍການປະກາດ ຍົກເລີກປະເທດລາວ ອອກຈາກການເປັນປະເທດ ຄອມມິວນິສ, ເພື່ອໃຫ້ມີຄວາມ ກົ້າເກິ່ງກັນທາງການເມືອງລະຫວ່າງລາວສອງຝ່າຍ.

ພັກຣັຖບານ ສປປລາວ. ເປັນຣັຖບານ, ແຕ່ປະຊາຊົນຢູ່ພາຍໃນປະເທດແລະອົງການຈັດຕັ້ງສາກົນບໍ່ໃຫ້ ການສນັບສນູນອູ້ມຊູ...ຍ້ອນເປັນຣັຖບານຜເດັດການພັກດຽວ ຄອງອຳນາດ, ບໍ່ມີຄວາມສາມາດພັທນາປະເທດຊາດ ໃຫ້ມີຄວາມຈເຣີນສີວິໄລໄດ້, ຂາດທຶນຮອນ, ຂາດອຸປກອນ, ພາຫະນະແລະຂາດບຸກຄະລາການ ທີ່ມີຄຸນພາບ.

ສ່ວນພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ບໍ່ແມ່ນຣັຖບານ... ແຕ່ມີປະຊາຊົນລາວ ຜູ້ຖືກຕັດສິດທິເສຣີພາບ ແລະປະຊາຊົນ ບັນດາປະເທດເພື່ອນມິຕ ໃນທົ່ວໂລກໄດ້ໃຫ້ ການສນັບສນູນ ຢ່າງກວ້າງຂວາງ ແລະເຂັ້ມແຂງທີ່ສຸດ!. ພວກເຮົາ, ມີຄວາມສາມາດນຳເອົາທຶນຮອນ, ນຳເອົາອຸປກອນພາຫະນະ ແລະບຸຄລາກອນ ທີ່ມີຄວາມຮູ້ ຄວາມສາມາດ ເຂົ້າມາຊ່ວຍກັນ

ເລັ່ງສ້າງເມືອງລາວຄືນໃໝ່ ເພື່ອຊົດເຊີຍເວລາ ທີ່ໄດ້ສູນເສັຽໄປ, ຖ້າຫາກວ່າ ພັກຣັດ ສປປລາວ. ອອກມາໂອ້ລົມກັບພວກເຮົາ.

ພວກເຮົາ ຮຽກຮ້ອງມາຍັງ ພັກຣັດ ສປປລາວ. ຈົ່ງເລີກຄິດ ໃຊ້ອຸບາຍຂັດຂວາງ ການສ້າງສັນຕິພາບ ໃນລາວ ທີ່ທາງສາກົນ ໄດ້ກຳນົດໃຫ້ເປັນໄປແລ້ວນັ້ນ, ໂດຍເອົາກົດໝາຍແນວລາວສ້າງຊາດ ເປັນເຄື່ອງມື ຕົວະຍົວະຫລອກລວງຄົນລາວນອກປະເທດ ໃຫ້ເຂົ້າໄປຢູ່ ໃນກ້ອງຂີ້ແຮ້ ຂອງພັກປະຊາຊົນປະຕິວັດລາວ ແຕ່ຝ່າຍດຽວ. ຫລອກໃຫ້ປະຊາຊົນລາວ ແລະຊາວໂລກ ຫລົງເຊື່ອວ່າ "ອັນນີ້, ແມ່ນການເຕົ້າໂຮມລາວສອງຝ່າຍ ທັງໃນ ແລະນອກປະເທດ" ນັ້ນ, ແມ່ນເປັນໄປບໍ່ໄດ້ເດັດຂາດ!. ເພາະການໂຮມລາວທີ່ສາກົນຍອມຮັບ ແລະໃຫ້ການສນັບສນູນອູ້ມຊູນັ້ນ ກໍຄື "ພັກ ປະຊາຊົນປະຕິວັດລາວ ທີ່ເປັນຣັຖບານຜເດັດການພັກດຽວ ຢູ່ໃນປະຈຸບັນນີ້ ກັບພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ທີ່ທຳການຕໍ່ສູ້ ຕາມແນວທາງ ສັນຕິວິທີ, ທວງເອົາສິດທິເສຣີພາບ ທີ່ພັກຣັດໃຊ້ກຳລັງທະຫານ ເຂົ້າມາປຸ້ນຈີ້ເອົາໄປນັ້ນ, ຄືນມາໃຫ້ແກ່ປະຊາຊົນ ລາວທັງຊາດ.

ດ້ວຍເຫດນີ້ເອງ, ພັກຣັດ ສປປລາວ. ບໍ່ສາມາດ ທີ່ຈະແກ້ໄຂບັນຫາຄວາມຂັດແຍ້ງພາຍໃນຊາດໄດ້ຕາມລຳພັງ ແຕ່ຝ່າຍດຽວເປັນເດັດຂາດ! ຖ້າບໍ່ມີພວກເຮົາ ປະຊາຊົນພັກ ແລະກຳລັງທັບ ເສຣີປະຊາທິປະໄຕລາວ ເຂົ້າຮ່ວມກັນແກ້ໄຂ. ການຕໍ່ສູ້ ຂອງປະຊາຊົນລາວ ກໍຈະຕ້ອງມີຢູ່ສືບໄປ.

**ປະຊາຊົນ ຈົ່ງມີໄຊຍ໌, ເສຣີປະຊາທິປະໄຕ ອົງອາດ, ຊາດລາວຈົ່ງຈເຣີນ.**

**ຂໍຂອບໃຈ.**

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງການປະທານພັກ**

**ອາຈານ ສົມນຶກ ຟອງສູອັນ**

**ວັນທີ ໑໔ ກໍຣະກະດາ ໔໐໐໗.**